ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 17 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 04 MAY 2015

ສຳນັກງານ ຄຄຊ
ເຂົ້າ ເລກທີ 454
ວັນທີ 05 MAY 2015
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ

ທີ 20/04/2015 ຫາ 24/04/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກັບທຽບກັບໂດລາ | ອາທິດຜ່ານມາ 13/04/2015 | ອາທິດນີ້ 21/04/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,0648 | 1,0705 | -0,53% |
| ໂດລາ/ເຢນ | 120,45 | 119,47 | 0,83% |
| ໂດລາ/ບາດ | 32,54 | 32,40 | 0,43% |
| ໂດລາ/ເປໂຊ | 44,51 | 44,26 | 0,57% |
| ໂດລາ/ຣູເປັຍ | 12.910,33 | 12.948,22 | -0,29% |
| ໂດລາ/ໂດລາສິງກະໂປ | 1,3602 | 1,3509 | 0,69% |
| ໂດລາ/ຢວນ | 6,2079 | 6,2007 | 0,12% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 10,92% ຈາກ 50,65 ໂດລາ/ບາເຣວ ມາເປັນ 56,18 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,13% ຈາກ 1.196,94 ໂດລາ/ອອນ ມາເປັນ 1.195,42 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,08% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,02% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ອ່ອນຄ່າລົງ 0,41% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,13% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,45% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,95% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,27% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 13/04/2015 | | | ອາທິດນີ້ 21/04/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.095,91 | 8.130,62 | 8.120,94 | 8.096,21 | 8.124,93 | 8.114,54 | -0,004% | 0,07% | 0,08% |
| ບາດ | 251,14 | 252,14 | 251,65 | 251,46 | 252,03 | 253,29 | -0,35% | -0,45% | -0,41% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.103,47 | 8.130,00 | 8.116,73 | 8.101,75 | 8.128,27 | 8.115,01 | 0,02% | 0,02% | 0,02% |
| ບາດ | 251,94 | 253,30 | 252,62 | 251,61 | 252,97 | 252,29 | 0,13% | 0,13% | 0,13% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,09% | -0,01% | -0,05% | 0,07% | 0,04% | 0,01% | | | |
| ບາດ | 0,32% | 0,46% | 0,39% | -0,17% | -0,13% | -0,16% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 0,30% ທຽບໃສ່ວັນທີ 17/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 30,66%.
- ປະລິມານເງິນ M2 ເພີ່ມຂຶ້ນ 0,35% ເມື່ອທຽບໃສ່ວັນທີ 17/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 21,48%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 20/04/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 6,70 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 11,60 ລ້ານໂດລາ ແລະ ຂາຍ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ໂດລາໄດ້ 4,90 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 155.38 ລ້ານບາດ (ໃນນີ້ ຊື້ບາດໄດ້ 120,48 ລ້ານບາດ ແລະ ຂາຍບາດໄດ້ 275,86 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 77,70% ແລະ ຫຼຸດລົງ 62,74% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 1,00 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 37,28 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 0,96 ລ້ານໂດລາ ແຕ່ຊື້ບາດສຸດທິ ຈໍານວນ 5,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 8,59 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 276,43 ລ້ານບາດ.

## ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 14/04/2015 | | ອາທິດທີ 20/04/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 11,24 | 121,26 | 3,55 | 92,19 | -68,42% | -23,98% |
| - ທ/ຄທຸລະກິດອື່ນໆ | 30,81 | 110,40 | 8,05 | 28,29 | -73,88% | -74,37% |
| ລວມຊື້: | 42,05 | 231,66 | 11,60 | 120,48 | -72,42% | -47,99% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 7,79 | 93,19 | 2,31 | 41,03 | -70,36% | -55,97% |
| - ທ/ຄທຸລະກິດອື່ນໆ | 24,14 | 739,01 | 2,59 | 234,83 | -89,26% | -68,22% |
| ລວມຂາຍ: | 31,93 | 832,20 | 4,90 | 275,86 | -84,65% | -66,85% |
| ຊື້-ຂາຍສຸດທິ ທທກ | 10.12 | -600,54 | 6,70 | -155,38 | -33,82% | -74,13% |
| ຜົດດ່ຽງ ຊື້-ຂາຍ | 24,07 | -259,24 | 57,75 | -128,97 | -336.92% | 130,33% |
| ມູນຄ່າການຊື້-ຂາຍ | 73.98 | 1.063,86 | 16,50 | 396,34 | -77,70% | -62,74% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 1,00 | 163,00 | 0,00 | 5,00 | | |
| - ທຫລ ຂາຍໃຫ້ ທທກ | 16.60 | 71,00 | 0,96 | 0,00 | | |
| ຊື້-ຂາຍສຸດທິ ທຫລ | -15,60 | 92,00 | -0,96 | 5,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 6,35 | 193,81 | 1,00 | 37,28 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 81.21 | 1.038,83 | 00,00 | 276,43 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 24.62 | 0,00 | 8,59 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 56.59 | 1.038,83 | -8,59 | 276,43 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 04/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,15% ຫຼຸດລົງ 0,02% ຈາກ 1,17% ໃນເດືອນ 03/2015.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 33,67 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 49% ທຽບໃສ່ອາທິດຜ່ານມາ.

## 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 379 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 38,47% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 434,60 ຕື້ກີບ ເພີ່ມຂຶ້ນ 16,70% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (17-23/04/2015) ມີຈຳນວນ 1.163 ຄັ້ງ ໂດຍມີມູນຄ່າ 537,68 ຕື້ກີບ ເພີ່ມຂຶ້ນ 96,06% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 357 ຄັ້ງ.

## 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.480,64 ຈຸດ ຫຼຸດລົງ 3,79% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 124.288 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 878,28 ລ້ານກີບ ຫຼຸດລົງ 87,34% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 75.19% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.862 ກີບ/ຮຸ້ນ ເພີ່ມຂຶ້ນ 43 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 28.001 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 192,15 ລ້ານກີບ ເພີ່ມຂຶ້ນ 185,90% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 61,91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,60%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.515 ກີບ/ຮຸ້ນ ເພີ່ມຂຶ້ນ 15 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 86.234 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 648,03 ລ້ານກີບ ຫຼຸດລົງ 90,56% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 85,63% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍ 8.500 ກີບ/ຮຸ້ນ, ໂດຍໃນອາທິດນີ້ແມ່ນບໍ່ມີການຈັບຄູ່ ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.800 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.053 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 38,20 ລ້ານກີບ ເພີ່ມຂຶ້ນ 272,33% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 23,86% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,73%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມຮ່ວມກັບບໍລິສັດຊີເອັດຊີຊີ ແລະ ທະນາຄານເອຊີລີດ້າ ເພື່ອປຶກສາຫາລືໃນການກະກຽມເຂົ້າເປັນຊະມະຊິກລະບົບຊື້ຂາຍຜ່ານອິນເຕີເນັດ (ລະບົບ EPG);

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສໍາເລັດການເຂົ້າຮ່ວມສໍາມະນາ ແລະ ຝຶກອົບຮົມດ້ານວິຊາການ ໃນຫົວຂໍ້ “Recovery and Resolution for weak Bank” ຢູ່ປະເທດກໍາປູເຈຍ ແລະ ຫົວຂໍ້ “Enabling Private Growth and Attraeting FDIs” ທີ່ ສູນຝຶກອົບຮົມລາວ-ສິງກະໂປ;
- ສໍາເລັດການເຂົ້າຮ່ວມສໍາມະນາ ໃນຫົວຂໍ້: “ວຽກງານຂອງໄອຍາການປະຊາຊົນ, ສານປະຊາຊົນ, ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແລະ ຕໍາຫຼວດເສດຖະກິດ” ທີ່ສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ;
- ສໍາເລັດການຈັດກອງປະຊຸມເຜີຍແຜ່ ຮ່າງນິຕິກໍາກ່ຽວກັບວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໂຮງແຮມລ້ານຊ້າງ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ກະກຽມເປີດກອງປະຊຸມໃຫຍ່ຄັ້ງທີ III ອົງຄະນະພັກ ຂອງ ທຫລ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ສ້າງລະບົບໂປຣແກຣມ Client Utility ເພື່ອຊ່ວຍບັນດາສະຖາບັນການເງິນຈຸລະພາກໃນການເກັບກໍາ ແລະ ລາຍງານຂໍ້ມູນສິນເຊື່ອຕາມ IFF;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ກະກຽມຈັດກອງປະຊຸມກັບຊ່ຽວຊານໂຄງການ AFP ເພື່ອປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຕໍ່ກັບຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງໂຄງການ BOL-AFP ກ່ອນທີ່ຈະລາຍງານທ່ານ ຜູ້ວ່າການ ທຫລ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພິມມະກອນ